**ມິຊຊາອາທິດທີ 4 ກຳນົດປາສກາ**

**ວັນທີ 25 ເມສາ 2021**




**ພຣະວໍລະສານໂດຍນັກບຸນຢວງ 10, 11-18**

ພຣະເຢຊູເຈົ້າຊົງກ່າວແກ່ຊາວຢິວວ່າ: "ເຮົາເປັນນາຍຊຸມພາບານທີ່ດີ. ນາຍຊຸມພາບານທີ່ດີຍອມສະລະຊີວິດເພື່ອຝູງແກະຂອງຕົນ. ສ່ວນລູກຈ້າງແລະຜູ້ທີ່ບໍ່ແມ່ນນາຍຊຸມພາບານນັ້ນ, ເຂົາບໍ່ໄດ້ເປັນເຈົ້າຂອງຂອງແກະເລີຍ. ດັ່ງນີ້ເມື່ອເຫັນໝາໄນເຂົ້າມາ, ເຂົາກໍປະຖິ້ມຝູງແກະແລ້ວໜີໄປ. ສ່ວນໝາໄນກໍຂົບຄາບແກະແກ່ໄປ ທັງທຳໃຫ້ຝູງແກະແຕກກະຈະກະຈາຍໝົດ. ຍ້ອນວ່າເຂົາບໍ່ໄດ້ເປັນຫ່ວງນຳໝູ່ແກະເລີຍ. ສ່ວນເຮົານີ້, ເຮົາແມ່ນນາຍຊຸມພາບານທີ່ດີ, ເຮົາຮູ້ຈັກໝູ່ແກະຂອງເຮົາ ແລະໝູ່ແກະຂອງເຮົາຮູ້ຈັກເຮົາ, ຄືພຣະບິດາຮູ້ຈັກເຮົາ ແລະເຮົາຮູ້ຈັກພຣະບິດາ. ເຮົາຍິນດີສະລະຊີວິດເພື່ອໝູ່ແກະຂອງເຮົາ. ເຮົາຍັງມີແກະອື່ນອີກຫລາຍຕົວທີ່ບໍ່ທັນເຂົ້າມາໃນຄອກ. ເຮົາຍັງຈະຕ້ອງພາແກະເຫລົ່ານັ້ນເຂົ້າມາ; ມັນຟັງສຽງຂອງເຮົາ, ແລ້ວຈະໂຮມກັນເປັນແກະຝູງດຽວແລະມີນາຍຊຸມພາບານແຕ່ຜູ້ດຽວ. ດ້ວຍເຫດນີ້ ພຣະບິດາຈຶ່ງຊົງຮັກເຮົາ, ຍ້ອນເຮົາຍອມສະລະຊີວິດຂອງເຮົາເພື່ອຈະເອົາຊີວິດນັ້ນຄືນໃໝ່. ບໍ່ມີໃຜສາມາດຍາດຊິງເອົາຊີວິດນັ້ນໄປຈາກເຮົາໄດ້. ເຮົາສະລະຊີວິດນັ້ນດ້ວຍຄວາມສະໝັກໃຈຂອງເຮົາ. ເຮົາມີສິດສະລະແລະມີສິດເອົາຄືນໄດ້: ນີ້ແລ້ວແມ່ນຄຳສັ່ງທີ່ເຮົາໄດ້ຮັບຈາກພຣະບິດາຂອງເຮົາ."

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ຫລັງຈາກທີ່ພຣະເຢຊູເຈົ້າກັບເປັນຄືນມາຈາກຄວາມຕາຍ ແລະໄດ້ປະຈັກມາຫາພວກລູກສິດ. ພຣະອົງໄດ້ມອບສັນຕິສຸກຂອງພຣະອົງພ້ອມທັງສິດອຳນາດໃນການຍົກໂທດໂຜດບາບໃຫ້ພວກລູກສິດ. ແລ້ວພຣະອົງໄດ້ສັ່ງພວກເຂົາໄປປະກາດຂ່າວດີແຫ່ງການກັບເປັນຄືນມາຂອງພຣະອົງໃຫ້ນານາຊາດຮູ້ຈັກ. ໂດຍເລີ່ມຕົ້ນຈາກນະຄອນເຢລູຊາແລມ.

ວັນນີ້, ໃນບົດອ່ານທີໜຶ່ງ, ພວກເຮົາກໍເຫັນວ່ານັກບຸນເປໂຕກຳລັງປະຕິບັດພາລະກິດການປະກາດຂ່າວດີຂອງພຣະເຢຊູເຈົ້າໃຫ້ກັບພວກຢິວໄດ້ຮູ້ຈັກ ແລະສຳນຶກໄດ້ວ່າ ເຢຊູແຫ່ງນາຊາແຣັດຊຶ່ງພວກເຂົາໄດ້ທໍລະມານແລະຄຶງໃສ່ກາງເຂນນັ້ນ. ດຽວນີ້, ພຣະອົງໄດ້ກັບເປັນຄືນມາແລ້ວ. ແລະສິ່ງທີ່ເປັນຫລັກຖານຢືນຢັນເຖິງການກັບເປັນຄືນມາຂອງພຣະອົງຄື ຄົນພິການສາມາດຫາຍດີໄດ້ດ້ວຍອາໄສນາມຊື່ຂອງເຢຊູແຫ່ງນາຊາແຣັດ.

ສ່ວນໃນບົດອ່ານທີສອງ, ນັກບຸນຢວງກໍບໍ່ຢຸດຢ່ອນທີ່ຈະປະກາດນາມຊື່ຂອງພຣະເຢຊູເຈົ້າໃຫ້ກັບກຸ່ມກຣິສຕະຊົນຂອງທ່ານໂດຍກ່າວວ່າ: ພວກເຮົາເປັນຜູ້ມີບຸນຫລາຍ. ຍ້ອນພວກເຮົາໄດ້ເປັນບຸດບຸນທຳຂອງພຣະເຈົ້າຜ່ານທາງພຣະບຸດຂອງພຣະອົງຄືພຣະເຢຊູກຣິສໂຕເຈົ້າ. ອາໄສການຕາຍແລະການກັບເປັນຄືນມາຂອງພຣະບຸດນີ້, ພວກເຮົາຈຶ່ງຮູ້ວ່າພຣະບິດາຊົງຮັກແພງພວກເຮົາຫລາຍຊ່ຳໃດ.

ສ່ວນໃນພຣະວໍລະສານວັນນີ້, ພວກເຮົາເຫັນວ່າພຣະເຢຊູເຈົ້າກໍກຳລັງປະຕິບັດພາລະກິດການປະກາດນາມຊື່ຂອງພຣະບິດາເຈົ້າສະຫວັນໃຫ້ທຸກຄົນໄດ້ຮູ້ຈັກຜ່ານທາງຊີວິດຂອງພຣະອົງ. ແລະຮູບພາບທີ່ພຣະເຢຊູເຈົ້າໃຊ້ວັນນີ້ກໍຄືນາຍຊຸມພາບານທີ່ດີ. ເພາະພາລະກິດຂອງນາຍຊຸມພາບານຄືເປັນຜູ້ຫ້ອນໂຮມຝູງແກະຂອງຕົນໃຫ້ເປັນໜຶ່ງດຽວກັນ ເພື່ອປົກປ້ອງຮັກສາ ແລະນຳພາຝູງແກະເຫລົ່ານີ້ໄປຫາຈຸດໝາຍປາຍທາງຄືເຮືອນຂອງພຣະບິດາເຈົ້າສະຫວັນນັ້ນເອງ.

**ພາວະນາ**

ໂອພຣະເຢຊູເຈົ້າ ຜູ້ເປັນນາຍຊຸມພາບານທີ່ດີ ໂຜດນຳພາລູກໃຫ້ກັບຄືນມາຝູງແກະຂອງພຣະອົງ. ໂຜດຊ່ວຍລູກໃຫ້ຮູ້ຈັກເດີນຕາມພຣະອົງເພື່ອລູກຈະໄດ້ໄປເຖິງຈຸດໝາຍປາຍທາງແຫ່ງຊີວິດອັນແມ່ນອານາຈັກສະຫວັນນັ້ນເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ